**Brad Hazzard**
Minister for Health

NSW GOVERNMENT

# MEDIA RELEASE

ວັນອັງຄານ, 5 ກໍລະກົດ 2022

## NSW ປະເຊີນກັບຄື້ນໃໝ່ລ່າສຸດຂອງ COVID-19

ທຸກໆຄົນໃນລັດ NSW ຖືກຂໍໃຫ້ເອົາໃຈໃສ່ວ່າເຂົາເຈົ້າໄດ້ທັນກັບສະພາບຂອງການສັກຢາວັກຊີນ COVID-19 ຂອງຕົນ ແລະ ມີຄວາມປະພຶດໃຫ້ປອດໄພຈາກ COVID ເພາະວ່າຄື້ນໃໝ່ຂອງການຕິດເຊື້ອໃນປັດຈຸບັນ, ເຊິ່ງມີຕົ້ນຕໍມາຈາກສາຍພັນຍ່ອຍ Omicron BA.4 ແລະ BA.5, ໄດ້ສືບຕໍ່ຂະຫຍາຍຕົວຂຶ້ນ.

ໄດ້ມີຄວາມຢ້ານກົວວ່າຈຳນວນຄົນທີ່ເຈັບປ່ວຍຮ້າຍແຮງແລະເສັຍຊີວິດຈະເພີ່ມຂຶ້ນຢ່າງມາກມາຍ ນອກຈາກວ່າຈະມີຄົນຈຳນວນຫຼາຍຂຶ້ນໄປຮັບການສັກຢາເສີມໃນທັນທີແລະມີຄວາມປະພຶດໃຫ້ປອດໄພຈາກ COVID.

ລັດຖະມົນຕີກະຊວງສາທາລະນະສຸກ ທ່ານ Brad Hazzard ໄດ້ກ່າວວ່າໂຕເລກສະແດງໃຫ້ເຫັນວ່າ 56 ເປີເຊັນ (1,232) ຂອງກໍລະນີເສັຍຊີວິດທີ່ກ່ຽວພັນກັບCOVIDໃນປີນີ້ ແມ່ນຕົກຢູ່ກຸ່ມຜູ້ທີ່ໄດ້ສັກຢາສອງໂດສຫຼືນ້ອຍກວ່າ.

“ເຮົາກຳລັງຢືນຢູ່ຈຸດເລີ່ມຕົ້ນຂອງຄື້ນທີສາມຂອງ Omicron ເຊິ່ງມີແນວໂນ້ມວ່າຈະພຸ່ງຂຶ້ນສູງສຸດໃນທ້າຍເດືອນກໍລະກົດຫຼືຕົ້ນເດືອນສິງຫາ. ການເພີ່ມຂຶ້ນຂອງການແພ່ຜາຍໃນຊຸມຊົນນີ້ ຈະນຳເອົາຄວາມສ່ຽງທີ່ເພີ່ມຂຶ້ນຢ່າງສູງສຳລັບຜູ້ທີ່ບໍ່ທັນກັບສະພາບຂອງການສັກຢາວັກຊີນຂອງຕົນ,” ທ່ານ Hazzard ກ່າວ.

“ວິທີທີ່ດີທີ່ສຸດເຊິ່ງທ່ານສາມາດປົກປ້ອງຕົວທ່ານເອງຈາກການເຈັບປ່ວຍໜັກຫຼືຮ້າຍແຮງກວ່ານັ້ນ ແມ່ນຕ້ອງສັກຢາວັກຊີນທຸກໆເຂັມທີ່ຈັດໄວ້ໃຫ້ທ່ານ.”

ຖ້າທ່ານໄດ້ສັກຢາຄົບຊຸດ ທ່ານຈະມີການປົກປ້ອງທີ່ສູງຂຶ້ນ 65 ເປີເຊັນ ຕໍ່ການເຂົ້າໂຮງໝໍຫຼືເສັຍຊີວິດຍ້ອນ Omicron ທີ່ໄດ້ຈາກວັກຊີນແຕ່ພຽງສອງໂດສ, ອີງຕາມຂໍ້ມູນຈາກ ສູນການຄົ້ນຄວ້າແລະຄວບຄຸມການສັກຢາກັນພະຍາດແຫ່ງຊາດ.

ເຈົ້າໜ້າທີ່ແພດອາວຸໂສສູງສຸດແຫ່ງລັດ NSW, Dr Kerry Chant ກ່າວວ່າ ນອກເໜືອໄປຈາກການນັດມື້ໄປສັກຢາໂດສເສີມແລ້ວ, ທຸກຄົນຄວນໃຊ້ສາມັນສຳນຶກແລະໃສ່ໜ້າກາກໃນສະຖານທີ່ສາທາລະນະໃນຮົ່ມ, ເຊິ່ງບໍ່ສາມາດຮັກສາລະດັບການຢູ່ຫ່າງກັນໄດ້.

“ໜ້າກາກ, ສຸຂະອະນາໄມມື, ຢູ່ບ້ານເມື່ອບໍ່ສະບາຍ, ກວດເບິ່ງຕົນເອງເມື່ອມີອາການ, ຢູ່ຫ່າງຈາກຄົນອື່ນ, ມາດຕະການທັງໝົດເຫຼົ່ານີ້ບໍ່ແມ່ນສິ່ງໃໝ່ສຳລັບພວກເຮົາ,” Dr Chant ກ່າວ.

“ນອກຈາກວ່າ ພວກເຮົາມາຮ່ວມແຮງຮ່ວມໃຈກັນອີກຄັ້ງ, ຄື້ນໃໝ່ນີ້ຈະໄປກະທົບຢ່າງແຮງຕໍ່ບັນດາໂຮງຮຽນແລະ

ທຸລະກິດ, ເໝືອນກັບທີ່ BA.1 ໄດ້ເຮັດມາແລ້ວ, ເຊິ່ງເຮັດໃຫ້ພະນັກງານເປັນພັນໆຄົນຕ້ອງຂາດການ."

ຜູ້ອາວຸໂສແລະຜູ້ທີ່ມີພາວະທາງສຸຂະພາບຢູ່ແລ້ວ ຖືກເຕືອນໃຫ້ໄປລົມກັບ GP ຫຼື ເຈົ້າໜ້າທີ່ດູແລສຸຂະພາບຂອງຕົນກ່ຽວກັບຢາຕ້ານໄວຣັສ ຖ້າເຂົາເຈົ້າຕິດເຊື້ອ COVID-19. ຢາຕ້ານໄວຣັສ ໃຊ້ໄດ້ຜົນດີສຸດຖ້າວ່າກິນຢານັ້ນພາຍໃນຫ້າມື້ນັບຈາກມື້ທີ່ເລີ່ມສະແດງອາການ.

ຢາໂດສເສີມ COVID-19 ຖືກແນະນຳໃຫ້ສັກແກ່ທຸກຄົນທີ່ມີອາຍຸ 16 ປີແລະໃຫຍ່ກວ່າ ເຊິ່ງໄດ້ສັກຢາໂດສສຸດທ້າຍຂອງຢາສັກຊຸດຕົ້ນຂອງເຂົາເຈົ້າຢ່າງນ້ອຍສາມເດືອນຜ່ານມາ.

ເພື່ອຊອກຫາຄລີນິກສັກຢາວັກຊີນທີ່ໃກ້ທ່ານທີ່ສຸດ, ໃຫ້ເຂົ້າໄປເບິ່ງທີ່ nsw.gov.au.

**ສື່ມວນຊົນ: Nicolette Kormendy | 0429 064 897**